## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 23 ມັງກອນ 2022 (01-23-2022)

---

### ຊຸມແຫ່ງການທໍຣະຍົດ

*ມີຜູ້ໃດຜູ້ນຶ່ງໄດ້ຮັບຄວາມໄວ້ວາງໃຈໃນທ່ານຢ່າງແທ້ຈິງຢ່າງໃດໃນຫຼາຍໆປີຜ່ານມາ?*

**ຈຸດສຳຄັນໃນບົດຮຽນ:** ພຣະເຈົ້າກຳລັງທຳງານ, ແມ້ກະທັ້ງຍາມທີ່ບໍ່ປາກົດເຫັນຢ່າງຊັດເຈນ.

**ພຣະຄຳພີຕອບສນອງຕໍ່ຊີວິດ.**

ການວາງໃຈເປັນສິ່ງທີ່ມີຄ່າສູງ ແລະ ມັນເຈັບປວດແທ້ໆເມື່ອການວາງໃຈນັ້ນຫາຍໄປ. ທ່ານເຄີຍມີເພື່ອນທັນຫຼັງໃຫ້ທ່ານບໍ່? ມີອ້າຍນ້ອງຍື່ນສຳນວນຟ້ອງສານຕໍ່ສູ້ທ່ານບໍ່? ຄວາມເຈັບປວດຈາກການທໍຣະຍົດສາມາດເປັນການບົດໃຫ້ແຫຼກຍ່ອຍຍັບ. ເມື່ອພັນທະມິດທີ່ເຮົາໄວ້ວາງໃຈກັບກາຍເປັນສັດຕູ, ຣະດູໜາວອັນຍາວນານຂອງການຊຶມເສົ້າສາມາດເຂົ້າມາປົກຄຸມພາຍໃນໃຈເຮົາ.

ເຄວິນເປັນຜູ້ປູກສ້າງໂບດໃນຕາເວັນຕົກກາງ. ເມື່ອອາຍຸ 25 ປີ, ເພິ່ນຮູ້ສຶກໄດ້ຮັບການຮຽກເອີ້ນໃຫ້ເລີ່ມກໍ່ຕັ້ງໂບດໃໝ່. ເພິ່ນໄດ້ຮວບຮວມເອົາທີມບຸກເບີກ, ສ້າງເວັບໄຊທ໌, ແລະ ເປັນເຈົ້າພາບກອງປະຊຸມເພື່ອກຳນົດຄວາມສົນໃຈ. ເປັນທີ່ຊາບກັນວ່າເພິ່ນບໍ່ເປັນຄົນແຂງແຮງໃນດ້ານທັກສະການຈັດຕັ້ງ, ເຄວິນໄດ້ເລືອກເອົາທີມງານແຂງແກ່ນດ້ານຍຸດທະສາດອ້ອມຮອບຕົວເອງໄວ້ຢ່າງຊານສລາດ. ໂບດພຸ່ງໄປດັ່ງຈະຫຼວດ. ແຕ່ແລ້ວສິ່ງທີ່ບໍ່ຄາດຄິດກໍເກີດຂຶ້ນ. ເບື້ອງຫຼັງສາກ, ຜູ້ນຳເຄວິນໄດ້ຈັດວາງພວກຫົວຕໍ່ຕ້ານຢ່າງລັບໆໄວ້. ພວກເຂົາຊອກຫາຜູ້ນຳໂບດສົດໆໃໝ່ໆທີ່ມີທັກສະໃນການບໍຣິຫານສູງກວ່າ, ແລະເຂົາໄດ້ໄລ່ເຄວິນອອກຈາກໂບດທີ່ເພິ່ນນຳພາເລີ່ມຕົ້ນກໍ່ຕັ້ງມາ. ບາງທີທ່ານອາດມີເຣື່ອງການຖືກທັກຫຼັງຄືກັນກັບເຄວິນ. ການກະບົດສາມາດເປັນການທຳລາຍ, ແລະຄວາມຂົມຂື່ນສາມາດກືນກິນພວກເຮົາ. ພວກເຮົາບໍ່ຈຳເປັນປະເຊີນກັບການທໍຣະຍົດຕາມລຳພັງ. ພຣະເຈົ້າຍັງທຳງານ, ດັ່ງທີ່ເຮົາຈະໄດ້ເຫັນຈາກຊີວິດຂອງໂຢເຊັບ.

**ພຣະຄຳພີກ່າວວ່າແນວໃດ:** (ເບິ່ງຕາມຂໍ້ 1, 2, ແລະ 3,)

### ການສຶກສາພຣະຄຳພີ

**1. <u>ປະຖົມມະການ 37:1-5.</u>**

*[1]ຢາໂຄບໄດ້ອາສັຍຢູ່ໃນປະເທດການາອານ ບ່ອນທີ່ພໍ່ຂອງຕົນເຄີຍອາສັຍຢູ່ແຕ່ກ່ອນນັ້ນເລື້ອຍມາ. [2]ປະວັດຄອບຄົວຢາໂຄບ*
*ມີດັ່ງນີ້: ໂຢເຊັບ ຊາຍໜຸ່ມອາຍຸ 17 ປີ ເຄີຍໄປລ້ຽງຝູງແກະ ແລະແບ້ນຳພວກອ້າຍ ຄືພວກລູກຊາຍຂອງນາງບິນຮາ ແລະ*
*ນາງຊີລະປາເມັຽນ້ອຍຂອງພໍ່ຢູ່ສເມີ ລາວໄດ້ຟ້ອງການກະທຳຊົ່ວ ຂອງພວກອ້າຍສູ່ພໍ່ຟັງເລື້ອຍໆ. [3]ອິສຣາເອນຜູ້ເປັນພໍ່ ຊຶ່ງ*
*ຮັກໂຢເຊັບຫຼາຍກວ່າລູກຊາຍຄົນອື່ນ ເພາະວ່າເພິ່ນໄດ້ລາວເມື່ອເວລາເຖົ້າແລ້ວ ເພິ່ນໄດ້ຕັດເສື້ອລ່າມມີແຂນຍືນນຶ່ງໃຫ້ລາວ.*
*[4]ເມື່ອພວກອ້າຍເຫັນດັ່ງນັ້ນ ກໍອິດສາແລະຊັງໂຢເຊັບຫຼາຍທີ່ສຸດຈົນບໍ່ເວົ້າຈາປາສັຍນຳລາວຢ່າງທີ່ເຄີຍສນິດສນົມຄືແຕ່ກ່ອນ.*
*[5-7]ວັນນຶ່ງ ໂຢເຊັບໄດ້ເລົ່າຄວາມຝັນສູ່ພວກອ້າຍຟັງວ່າ, "ຂ້ອຍຝັນເຫັນພວກອ້າຍກັບຂ້ອຍກຳລັງພາກັນມັດເຂົ້າຢູ່ທົ່ງນາ ເມື່ອ*
*ມັດແລ້ວມັດເຂົ້ານັ້ນກໍຕັ້ງຂຶ້ນ ມັດເຂົ້າຂອງພວກອ້າຍກໍມາລ້ອມມັດເຂົ້າຂ້ອຍເປັນວົງມົນ ແລ້ວກໍລົ້ມລົງຕໍ່ໜ້າມັດເຂົ້າຂ້ອຍ.*

ພວກເຮົາເກີດມາໃນຄອບຄົວ, ແລະທຸກຄອບຄົວກໍທົນທຸກຍ້ອນຄວາມບາບຈາກລຸ້ນສູ່ລຸ້ນ. ນິສັຍບາບເຫຼົ່ານັ້ນໄດ້ຖ່າຍ

ທອດຈາກລຸ້ນນີ້ສູ່ລຸ້ນໜ້າ. ແມ່ນແຕ່ ຢາໂຄບ ພໍ່ຂອງໂຢເຊັບ ກໍບໍ່ຖືກຍົກເວັ້ນ. ໜ້າມືດຕາມົວຕໍ່ຄວາມຜິດໃນຄວາມນິຍົມຊົມຊອບຂອງເພິ່ນ, ຢາໂຄບໄດ້ກະທຳຄວາມຜິດຢ່າງໃຫຍ່ຫຼວງຊຶ່ງຈະຫຼັ່ງໄຫຼສູ່ລູກຂອງເພິ່ນ ແລະ ເປັນຜົນສະທ້ອນເລິກລົງໄປຮອດຄອບຄົວ. ຂໍ້ບົກພ່ອງທີ່ຊັດເຈນທີ່ສຸດແມ່ນຍອມຮັບປະເພນີຫຼາຍເມັຽແລະປາກົດການທັກຫຼັງຊັງບ່ຽງຢ່າງອຶກກະທຶກ.

*ທ່ານອາດບັນລະຍາຍຄອບຄົວຂອງຢາໂຄບຢ່າງໃດ?*

ຢາໂຄບໄດ້ສາດນ້ຳມັນໃສ່ກອງໄຟ ໂດຍການເອົາ “ເສື້ອລ່າມແຂນຍາວ” ຜືນນຶ່ງໃຫ້ໂຢເຊັບ. ນັກສາສນາສາດບໍ່ແນ່ໃຈວ່າເສື້ອຄຸມດັ່ງກ່າວມີສີສັນພິເສດ ຫຼືເປັນເສື້ອແຂນຍາວທີ່ເປັນຈຸດໂດດເດັ່ນ. ບໍ່ວ່າທາງໃດກໍຕາມ, ເສື້ອຄຸມທີ່ເຮັດເອງແບບພິເສດນີ້ຄ້າຍກັບວ່າເປັນແຮງພັກດັນຕໍ່ພວກອ້າຍ, ເຖິງແມ່ນວ່າ ຂໍ້ຄວາມບໍ່ໄດ້ບອກວ່າໂຢເຊັບຢາກໄດ້ຂອງຂວັນຫຼືບໍ່ກໍຕາມ. ໃນປະເພນີສມັຍບູຮານ, ການປະຕິເສດຂອງຂວັນຖືເປັນການປະຕິເສດບຸກຄົນທີ່ໃຫ້, ດັ່ງນັ້ນໂຢເຊັບຈຳຕ້ອງໄດ້ນຸ່ງເສື້ອຜືນນັ້ນ. ໂຢເຊັບໄດ້ກາຍເປັນເປົ້າສາຍຕາ, ເພາະສາຍຕາຈ້ອງໃສ່ເສື້ອຄຸມເຮັດໃຫ້ເລືອດອ້າຍຂອງລາວຟົດຂຶ້ນ. ໃນຂນະທີ່ພັຍພິບັດຂອງໂຢເຊັບສ່ວນຫຼາຍແມ່ນຄວາມຜິດພໍ່ຂອງລາວກໍຈິງ, ມັນຍັງມີຄວາມສຳຄັນທີ່ຄວນສັງເກດເຫັນອຳນາດຂອງພຣະເຈົ້າທີ່ມີບົດບາດໃນເຣື່ອງນີ້. ໃນເມື່ອພຣະເຈົ້າບໍ່ສາມາດຖືກຕຳນິສຳລັບຄວາມຊົ່ວຮ້າຍ, ແມ່ນພຣະອົງໄດ້ອະນຸຍາດໃຫ້ພວກເຮົາເດີນຜ່ານຫ່ອມພູອັນມືດມິດນັ້ນ.

ພວກເຮົາຮູ້ສິ່ງນີ້ໄດ້ແນວໃດ? ໂຢເຊັບໄດ້ຝັນເຫັນໃນຄວາມຝັນເທື່ອທຳອິດເຖິງສິ່ງທີ່ພຣະເຈົ້າຈະກະທຳ. ພຣະເຈົ້າໄດ້ສົ່ງຄວາມຝັນມາໃຫ້ ແລະໂຢເຊັບກໍໄດ້ເລົ່າສິ່ງທີ່ລາວໄດ້ເຫັນ. ມັນອາດເບິ່ງຄືວ່າເປັນການກະທຳທີ່ໂງ່, ແຕ່ໂຢເຊັບກໍໄດ້ບອກຢ່າງຈິງຈັງໃຫ້ອ້າຍຂອງລາວແລ້ວວ່າ ໃນທີ່ສຸດພວກເຂົາຈະໄດ້ກົ້ມຂາບລົງຕໍ່ໜ້າລາວ. ໂດຍການເປີດເຜີຍຄວາມຝັນຂອງລາວ, ໂຢເຊັບໄດ້ກຳນົດເສັ້ນທາງຊີວິດຂອງລາວ ແລະ ໄດ້ເພີ່ມຄວາມກຽດຊັງໃຫ້ອ້າຍຂອງລາວຕໍ່ລາວ.

ໃນທີ່ສຸດ, ເຣື່ອງຂອງໂຢເຊັບແມ່ນເຣື່ອງກ່ຽວກັບພຣະເຈົ້ານຳໃຊ້ໃນກິຈກັມປະຈຳວັນຂອງຊີວິດມະນຸສໂລກ ເພື່ອນຳມາຊຶ່ງຈຸດປະສົງອັນຍິ່ງໃຫຍ່ຂອງພຣະອົງ. ບໍ່ເໝືອນເຣື່ອງຂອງໂມເຊ, ບໍ່ມີການອັສຈັນໃດໆທີ່ສະແດງໃຫ້ເຫັນການອັສຈັນທີ່ຈະເກີດຂຶ້ນໃນຊີວິດຂອງໂຢເຊັບ. ເຖິງຈະບໍ່ປາກົດແຈ້ງກໍຕາມ. ແລະຊີວິດປົກກະຕິກໍດຳເນີນໄປແນວນັ້ນ.

ເຣື່ອງຂອງໂຢເຊັບຊ່ອຍໃຫ້ເຮົາເຫັນວ່າ ເຮົາສາມາດວາງໃຈໃຫ້ພຣະເຈົ້າຊ່ອຍເຮົາ ຜ່ານພົ້ນບັນຫາຄອບຄົວທຸກວັນໄດ້ຢ່າງໃດ. ການສຶກສາຣະບົບຄອບຄົວ ແລະເຊື້ອສາຍທີ່ບໍ່ທຳງານ, ໄດ້ສ້າງການສົນທະນາຢ່າງຫຼວງຫຼາຍ. ພວກເຮົາທຸກຄົນຢູ່ໃນເຮືອລຳດຽວກັນ: ພວກເຮົາມີການແຕກຫັກໃນຄົວເຮືອນຂອງເຮົາ. ເໝືອນດັ່ງປາລອຍໃນນ້ຳເປື້ອນ, ພວກເຮົາມັກບໍ່ລະວັງສິ່ງທີ່ເປັນພິດຕົວຈິງຂອງຄອບຄົວເຮົາ. ຂນະທີ່ທ່ານອ່ານເຣື່ອງຂອງໂຢເຊັບ, ຈົ່ງລະວັງເຣື່ອງທີ່ເປັນເອກະລັກຂອງຄອບຄົວທ່ານ ວ່າມັນໄດ້ຫຼໍ່ຫຼອມທ່ານຢ່າງໃດ. ພຣະເຈົ້າຕ້ອງການໃຊ້ມັນ-ທັງໝົດ-ເພື່ອນຳກຽດມາສູ່ພຣະອົງ.

## 2. ປະຖົມການ 37:19-24.

*19-20 ມີຜູ້ນຶ່ງໃນຈຳນວນພວກອ້າຍເວົ້າວ່າ, “ຄົນຊ່າງຝັນມານີ້ແລ້ວ ບັດນີ້ ພວກເຮົາພາກັນຂ້າມັນເທາະ ແລະໂຍນສົບມັນລົງ*
*ສ້າງ ແລ້ວພວກເຮົາຈຶ່ງພາກັນເວົ້າວ່າ ສັດຮ້າຍກັດກິນມັນ ແລ້ວເຮົາກໍຈະໄດ້ຄອຍເບິ່ງວ່າຄວາມຝັນຂອງມັນນັ້ນຈະເປັນໄປໄດ້*
*ບໍ່.” 21 ເມື່ອຣູເບັນໄດ້ຍິນພວກອ້າຍເວົ້າດັ່ງນັ້ນ ກໍພະຍາຍາມຊອກຫາວິທີຊ່ອຍໂຢເຊັບ. 22 ລາວເວົ້າວ່າ “ຢ່າຕີຢ່າຂ້າມັນເທາະ*
*ພຽງແຕ່ໂຍນມັນລົງໃນສ້າງບ່ອນຖິ່ນກັນດານນີ້ກໍພໍແລ້ວ” ລາວເວົ້າເຊັ່ນນີ້ ກໍເພື່ອຈະຊ່ອຍເຫຼືອໂຢເຊັບ ໃຫ້ພົ້ນຈາກເງື້ອມມື*
*ຂອງພວກເຂົາ ແລ້ວກໍຈະສົ່ງລາວເມືອຫາພໍ່. 23 ພໍໂຢເຊັບມາຮອດບ່ອນທີ່ພວກເຂົາຢູ່ ພວກເຂົາກໍກຸມແກ້ເສື້ອລ່າມມີແຂນຂອງ*
*ລາວອອກ. 24 ແລ້ວຈັບລາວໂຍນລົງໃນສ້າງທີ່ບໍ່ມີນ້ຳ.*

ພວກອ້າຍອາດບໍ່ໄດ້ຊອກເປີດປະຕູແຫ່ງຄວາມຕາຍຂອງໂຢເຊັບດອກ, ແຕ່ເມື່ອໂອກາດເຂົ້າມາເອງ, ພວກເຂົາຈຶ່ງວາງແຜນຖິ້ມລາວລົງໃນຂຸມແລະປ່ອຍໃຫ້ລາວຕາຍ. ຈົບເກມ-ເຂົາຄິດວ່າ.

ທີ່ນີ້ມີຫຍັງເກີດຂຶ້ນແທ້? ຮາກຂອງຄວາມຂົມຂື່ນເກັບກ່ຽວຄວາມຂົມຂື່ນ. ພຣະເຢຊູກ່າວວ່າ *"ຄົນດີຍ່ອມເອົາຂອງດີອອກມາຈາກຄັງດີແຫ່ງໃຈຂອງຕົນ ແລະ ຄົນຊົ່ວກໍຍ່ອມເອົາຂອງຊົ່ວອອກມາຈາກຄັງຊົ່ວແຫ່ງໃຈຂອງຕົນເພາະວ່າໃຈເຕັມລົ້ນດ້ວຍອັນໃດ ປາກກໍເວົ້າອອກມາຢ່າງນັ້ນ (ລູກາ 6:45).* ຄວາມເວົ້າຂອງເຮົາແມ່ນເຄື່ອງໝາຍຂອງສິ່ງເກີດຂຶ້ນໃນສ່ວນເລິກໃນໃຈຂອງເຮົາ. ພິດຮ້າຍຂອງຄວາມອິດສານັ້ນ, ພວກເຮົາໄດ້ເຫັນແຈ່ມແຈ້ງແລ້ວໃນພວກອ້າຍທີ່ເປັນພິດເປັນພັຍຂອງໂຢເຊັບ. ພວກເຮົາຕ້ອງສລາດກວດເບິ່ງໃຈຂອງເຮົາເອງ. ມັນເປັນການກ່າວໂທດເພື່ອຢຸດເຮົາໃຫ້ໄຕ່ຕອງບຸກຄົນທີ່ເຮົາຖືກລໍ້ລວງໃຫ້ອິດສາໃນຊີວິດປະຈຸບັນຂອງເຮົາ. ການອິດສາເກີດຂຶ້ນໃນທົ່ວທັງໂລກ, ແລະຢ່າງໜ້າເສັຽດາຍ, ພວກເຮົາສາມາດພົບເຫັນໃນພຣະກາຍຂອງພຣະຄຣິດເໝືອນກັນ.

ມັນສຳຄັນຄວນແກ່ການພິຈາຣະນາວ່າຄວາມອິດສາອາສັຍຢູ່ໃນໃຈເຮົາຫຼືບໍ່, ມັນເປັນການສລາດທີ່ຈະພິຈາຣະນາ ເບິ່ງວ່າພວກເຮົາເປັນເຫດໃຫ້ເກີດການອິດສາໃນໃຈຄົນອື່ນບໍ່. ບາງທີພວກເຂົາສົມທຽບເຂົາໃສ່ທ່ານເອງ ຊຶ່ງເຮັດໃຫ້ເຂົາຮູ້ສຶກວ່າພຣະເຈົ້າໄດ້ກະທຳຕໍ່ທ່ານຫຼືປະທານໃຫ້ທ່ານຫຼາຍກວ່າເຂົາ. ພຣະເຈົ້າໄດ້ໃຫ້ຄວາມສຳເຣັດແກ່ທ່ານໃນບາງບ່ອນຂອງຊີວິດທ່ານບໍ່? ທ່ານມີຊີວິດສົມຣົດທີ່ວິເສດ, ແລະສນິດສນົມກົມກຽວກັນດີບໍ່? ທ່ານມີລູກທີ່ມີການປະພຶດດີບໍ່? ທ່ານມີການງານຕຳແໜ່ງສູງບໍ່? ຖ້າອົງພຣະຜູ້ເປັນເຈົ້າອວຍພອນທ່ານຢ່າງຊັດເຈນໃນທາງໃດທາງນຶ່ງ, ມີໂອກາດເປັນໄປໄດ້ທີ່ຄົນອື່ນຈະອິດສາ ແລະກໍແຄ້ນເຄືອງທ່ານໃນເຣື່ອງນັ້ນໆ.

ການສູ້ຊົນກັບການອິດສາມີຈິງກັບເຮົາທຸກຄົນ. ໃນບາງຈຸດ, ພວກເຮົາອາດກ້າວເຂົ້າໃນການທົດລອງນີ້ ແລະອາດໃຈຮ້າຍໃຫ້ພຣະເຈົ້າຢ່າງລັບໆທີ່ພຣະອົງປະທານສິ່ງທີ່ເຮົາຢາກໄດ້ໃຫ້ຄົນອື່ນ. ເພື່ອປ້ອງກັນຈາກສິ່ງນີ້, ພວກເຮົາຕ້ອງສວມຄວາມຄິດພຣະຄຣິດ. *"[3]ຢ່າເຮັດສິ່ງໃດໃນທາງຊິງດີຫລືຖືດີກັນ ແຕ່ຈົ່ງຖ່ອມໃຈລົງຖືວ່າຄົນອື່ນດີກວ່າຕົນ. [4]ຢ່າໃຫ້ຜູ້ໃດເຫັນແກ່ປໂຍດຂອງຕົນຝ່າຍດຽວ ແຕ່ຈົ່ງເຫັນແກ່ປໂຍດຂອງຄົນອື່ນດ້ວຍ. [5]ເຈົ້າທັງຫຼາຍຈົ່ງມີນໍ້າໃຈຕໍ່ກັນເໝືອນຢ່າງທີ່ມີໃນພຣະເຢຊູຄຣິດ"* (ຟີລິບປອຍ 2:3-5).

*ຜົນສະທ້ອນທີ່ເປັນອັນຕະລາຍອັນໃດທີ່ທ່ານເຫັນຈາກຄວາມອິດສາແລະໃຈຮ້າຍ?*

## 3. ປະຖົມການ 37:26-27

*[26]ຢູດາເວົ້າຕໍ່ພວກອ້າຍວ່າ, "ຖ້າໝູ່ເຮົາຂ້າມັນ ແລະອຳຄວາມຜິດໄວ້ ໝູ່ເຮົາຈະໄດ້ຫຍັງ? [27]ໝູ່ເຮົາພາກັນຂາຍມັນໃຫ້ພວກອິສ-ມາເອນຈະບໍ່ດີກວ່າບໍ? ຖ້າເຮັດຢ່າງຂ້ອຍວ່ານີ້ ກໍບໍ່ຕ້ອງຂ້າຕີມັນ ເຖິງຢ່າງໃດມັນກໍເປັນນ້ອງຂອງພວກເຮົາ ແລະເປັນເລືອດເນື້ອເຊື້ອໄຂອັນດຽວກັນ" ພວກອ້າຍທຸກຄົນກໍເຫັນພ້ອມ.*

ເຖິງແມ່ນວ່າເຣື່ອງຂອງໂຢເຊັບເບິ່ງຄືວ່າຈະຢຸດສງັກຢູ່ໃນຂຸມນັ້ນ, ແຕ່ພຣະເຈົ້າມີແຜນການອື່ນ. ພວກອ້າຍ"ໄດ້ລົງຄວາມເຫັນ" ແລະໄດ້ຕັດສິນໃຈໃນວິນາທີສຸດທ້າຍວ່າຂາຍລາວໃຫ້ໄປເປັນທາດແທນທີ່ຈະປ່ອຍລາວໄວ້ໃນນໍ້າສ້າງໃຫ້ຕາຍ. ການຕັດສິນໃຈໃນວິນາທີສຸດທ້າຍຂອງເຂົາຈະເປັນຜົນດີຕໍ່ຄອບຄົວຂອງເຂົາ-ແລະ ໃນທີ່ສຸດຕໍ່ປະເທດອິສຣາເອນທັງປະເທດ-ໃນທາງທີ່ເຂົາຄິດບໍ່ເຖິງ. ຫຼາຍປີຕໍ່ມາ, ໂຢເຊັບໄດ້ເວົ້າເຖິງເຊື້ອສາຍນຶ່ງທີ່ຍິ່ງໃຫຍ່ທີ່ສຸດຂອງເຊື້ອສາຍອື່ນໆໃນວັນນະຄະດີບູຮານ. ລາວຈະຈ້ອງເບິ່ງຕາຜູ້ຊາຍທີ່ອິດເມື່ອຍເຫຼົ່ານັ້ນແລະເວົ້າວ່າ, "ການທີ່ພວກເຈົ້າໄດ້ເຮັດອຸບາຍຊົ່ວຕໍ່ຂ້ອຍນັ້ນບັດນີ້ພຣະເຈົ້າໄດ້ຕອບແທນຄືນດ້ວຍການດີ ເພື່ອຮັກສາຊີວິດຂອງປະຊາຊົນທັງມວນໄວ້ ທີ່ພວກເຂົາມີຊີວິດຢູ່ໄດ້ທຸກວັນນີ້ກໍຍ້ອນຄວາມດີອັນນີ້ (ປຖກ 50:20). ມັນເປັນແຜນການອັນເລີດລໍ້າຈາກພຣະອາຈານ.

ທ່ານເຫັນການງານຂອງພຣະເຈົ້າຢ່າງໃດໃນຊີວິດຂອງຄົນເຮົາໃນຂນະຕົກຂຸມ?

ຂນະທີ່ໂຢເຊັບຮູ້ສຶກຄືວ່າພຣະເຈົ້າໄດ້ປະຖິ້ມລາວໃນເວລານັ້ນ, ແທ້ຈິງພຣະເຈົ້າໄດ້ມີແຜນການຍົກລາວຂື້ນສູ່ຕຳແໜ່ງອຳນາດສູງກວ່າ. ພຣະເຈົ້າມັກຈະເຮັດສິ່ງໃຫຍ່ກວ່າທີ່ເຮົາຄິດສເມີ. ແມ້ກະທັ້ງເວລາຄົນອື່ນຕັດເຮົາອອກ ພຣະອົງຊົງນັບເຮົາເຂົ້າ. ໂຢເຊັບຖືກທໍຣະຍົດຈາກອ້າຍຂອງລາວເອງແລະຂາຍເປັນ"ເງິນຊາວຫຼຽນ"(ຂໍ້ 28). ຄ້າຍຄືກັນກັບສິ່ງທີ່ເກີດຂື້ນກັບພຣະເຢຊູ. ນັກສາສນາສາດຫຼາຍຄົນໄດ້ຊີ້ປະເດັນທີ່ວ່າ ເຣື່ອງຂອງໂຢເຊັບເປັນເງົາຂອງເຣື່ອງໃຫຍ່ທີ່ສຸດ. ຄວາມຄ້າຍຄືກັນກໍຊັດເຈນ. ລາວເປັນລູກຫົວແກ້ວຫົວແຫວນຂອງພໍ່, ຖືກສົ່ງໄປທົ່ງນາເພື່ອກວດກາເບິ່ງພວກອ້າຍ, ແລະຖືກຂາຍເປັນເງິນບໍ່ເທົ່າໃດຫຼຽນ. ຍິ່ງໄປກວ່ານັ້ນ: ໂດຍທາງຄວາມທຸກທໍຣະມານທີ່ບໍ່ຍຸຕິທັມ, ລາວໄດ້ກາຍເປັນຜູ້ໂຜດຄົນຂອງລາວໃຫ້ພົ້ນພັຍແລະປົກຄອງເຂົາ. ມັນເປັນວິທີທີ່ໜ້າສົນໃຈທີ່ຈະຕ້ອງຄິດກ່ຽວກັບເຣື່ອງນີ້. ແມ່ນແຕ່ໃນພຣະຄັມພີເດີມ, ພຣະເຈົ້າໄດ້ຊີ້ໃສ່ສິ່ງທີ່ພຣະອົງຈະກະທຳຜ່ານທາງພຣະບຸດຂອງພຣະອົງ ເພື່ອຊອກຫາແລະໂຜດເອົາຜູ້ຫຼົງຫາຍ.

ໂຢເຊັບໄດ້ພົບກັບຄວາມທຸກທໍຣະມານມາກມາຍໃນຊີວິດ. ຖືກຂາຍເປັນທາດກໍເລວຮ້າຍພໍແຮງແລ້ວ, ແຕ່ໂຢເຊັບຍັງຈະພົບກັບຄວາມສູນເສັຽຕື່ມອີກ. ເຖິງຢ່າງໃດກໍຕາມ ພຣະເຈົ້າຍັງຊົງທຳງານຢູ່, ແລະ ພຣະອົງຊົງທຳງານໃນຊີວິດເຮົາເໝືອນກັນ. ເມື່ອພວກເຮົາຢູ່ໃນຊ່ວງເວລາຊີວິດເບິ່ງຄືວ່າ ຈະເຖິງທາງຕັນຈົ່ງລະນຶກເຖິງຊີວິດຂອງໂຢເຊັບ. ພຣະຫັດຂອງພຣະເຈົ້າອາດເຫັນບໍ່ຊັດເຈນໃນເວລານັ້ນ, ແຕ່ ພຣະອົງຍັງຊົງທຳງານຢູ່. ຊີວິດຈະຈັດການກັບສ່ວນຂອງຄວາມຜິດຫວັງທີ່ເຮົາໄດ້ຮັບ, ແຕ່ ຂໍກຸນແຈແມ່ນ ຈົ່ງກ້າວໄປຂ້າງໜ້າແລະວາງໃຈໃນພຣະຄຣິດ.

*ກຸ່ມຂອງເຮົາສາມາດຊ່ວຍແນວໃດໃນເວລາເຮົາປະເຊີນກັບຄວາມເສັຽຫາຍແລະການທໍຣະຍົດ?*

## ນຳໃຊ້ໃນຊີວິດ

ພຣະເຈົ້າກຳລັງທຳງານ, ເຖິງແມ່ນຈະບໍ່ເຫັນຢ່າງຊັດເຈນກໍຕາມ. ຈົ່ງເລືອກການນຳໃຊ້ຂໍ້ໃດນຶ່ງຕໍ່ລົງໄປນີ້:

- **ຈົ່ງສັດຊື່ຕໍ່ພຣະເຈົ້າ.** ຫຼາຍຊີວິດຖືກປະຕິເສດ, ບໍ່ຍອມຮັບຮູ້ວ່າຫົວໃຈຂອງເຂົາແຕກສລາຍ. ບາດກ້າວທຳອິດ ແມ່ນເປີດໃຈກັບພຣະເຈົ້າ ແລະ ຍອມຮັບຄວາມຮູ້ສຶກທີ່ຍາກຂອງທ່ານ.
- **ອະທິຖານເພື່ອເພື່ອນຄົນນຶ່ງ.** ເຮົາສ່ວນຫຼາຍຮູ້ຈັກບາງຄົນທີ່ຮູ້ສຶກຖືກທໍຣະຍົດຢ່າງໜັກ. ຈົ່ງເລີ້ມອະທິຖານເພື່ອເຂົາແລະຊອກຫາເຄື່ອງໝາຍວ່າພຣະເຈົ້າກຳລັງທຳງານໃນການຊ່ວຍເຂົາໃຫ້ໄດ້ຮັບການຮັກສາ. ຈົ່ງຕຽມພ້ອມທີ່ຈະກ້າວເຂົ້າໄປໃນຄຳຕອບຕໍ່ຄຳອະທິຖານນັ້ນ.
- **ເລີ້ມຕັ້ງກຸ່ມຊ່ວຍໜູນ.** ເມື່ອທ່ານພົບເຫັນຄົນອື່ນຈັດການກັບການທໍຣະຍົດ, ຈົ່ງພິຈາຣະນາເລີ້ມຕົ້ນ ສຶກສາພຣະຄັມພີຢ່າງບໍ່ເປັນທາງການ, ບາງທີອາດເປັນກາເຟປະຈຳອາທິດ. ຈົ່ງເຊີນເອົາຜູ້ທີ່ຊນະການຕໍ່ສູ້ຂອງເຂົາຈັກຄົນສອງຄົນທີ່ສາມາດຊ່ວຍຄົນອື່ນໄດ້.

ເຮົາມາພາກັນກັບໄປຫາຜູ້ປູກສ້າງໂບດເຄວິນເທາະ. ເຣື່ອງຂອງລາວບໍ່ຈົບລົງບ່ອນລາວຖືກໄລ່ອອກຈາກໂບດແຫ່ງທຳອິດນັ້ນ. ລາວປະຕິເສດທີ່ຈະຍອມແພ້ໃນຄວາມເຈັບປວດຂອງລາວ, ລາວຊອກຫາຜູ້ໃຫ້ຄຳແນະນຳ ແລະຊອກຫາວິທີທາງເຕີບໃຫຍ່ຂື້ນຜ່ານຄວາມເຈັບປວດ, ແລະຊອກຫາປະສົບການເພີ້ມ. ມັນໄດ້ກາຍເປັນຊ່ວງເວລາອັນແນ່ນອນໃນຊີວິດຂອງລາວ, ແລະລາວຈະກາຍເປັນສິດຍາພິບານທີ່ມີສຸຂພາບສົມບູນ, ແລະມີຄວາມຫ່ວງໃຍ. ການທໍຣະຍົດສາມາດເຮັດໃຫ້ເຮົາຂົມຂື່ນຫຼືດີຂຶ້ນກວ່າເກົ່າ. ຈົ່ງເຊື້ອເຊີນພຣະຜູ້ເປັນເຈົ້າໃຫ້ໃຊ້ຄວາມເຈັບປວດຂອງທ່ານເພື່ອໃຫ້ເກີດຜົນການເຕີບໃຫຍ່ໃນຊີວິດຂອງເຮົາ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PSI**